ບໍລິສັດ ລາວອາໂກຣເທັກ ມະຫາຊົນ

pwc

ເອກະສານລາຍງານການເງິນ (ທົບທວນຄືນ)

ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ ວັນທີ 30 ມິຖຸນາ 2021

www.pwc.com/la

ສາລະບານ **ໜ້າ**

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານການເງິນ	1
ໃບລາຍງານຖານະການເງິນ	2
ໃບລາຍງານຜົນໄດ້ຮັບ	3
ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ	4
ໃບລາຍງານກະແສເງິນສົດ	5 - 6
ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນໂດຍຫຍໍ້	7 - 12

ບົດລາຍງານ ຂອງຜູ້ກວດສອບອິດສະຫຼະໃນການທົບທວນຄືນເອກະສານລາຍງານການເງິນ

ເຖິງ: ຜູ້ຖືຮຸ້ນ ແລະ ສະພາຜູ້ອຳນວຍການ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ

ພວກຂ້າພະເຈົ້າ ໄດ້ດຳເນີນການທົບທວນຄືນ ຂໍ້ມູນການເງິນ ຂອງບໍລິສັດ ລາວອາໂກຣເທັກ ມະຫາຊົນ (ບໍລິສັດ) ເຊິ່ງປະກອບດ້ວຍ ໃບລາຍງານຖານະການເງິນ ສິ້ນສຸດວັນທີ 30 ມິຖຸນາ 2021 ແລະ ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ ແລະ ໃບລາຍງານກະແສເງິນສົດ ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດວັນທີດຽວກັນ, ແລະ ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນໂດຍ ຫຍໍ້. ຜູ້ບໍລິຫານ ຂອງບໍລິສັດ ມີໜ້າທີຮັບຜິດຊອບໃນການສ້າງ ແລະ ນຳສະເໜີ ເອກະສານລາຍງານການເງິນເພື່ອໃຫ້ສອດຄ່ອງກັບນະໂຍບາຍ ການບັນຊີ ຕາມທີ່ໄດ້ກຳນົດໄວ້ໃນ ບົດອະທິບາຍຊ້ອນທ້າຍໃນຂໍ້ທີ 2 ຂອງເອກະສານລາຍງານການເງິນປະຈຳປີ ຂອງບໍລິສັດ. ຄວາມຮັບຜິດຊອບ ຂອງພວກເຮົາຄືການອອກບົດລາຍງານ ເພື່ອສະແດງຄວາມເຫັນຕໍ່ເອກະສານລາຍງານການເງິນດັ່ງກ່າວ ບົນພື້ນຖານການ ທົບທວນຄືນ ຂອງພວກເຮົາ.

ຂອບເຂດ ການທົບທວນຄືນ

ພວກເຮົາໄດ້ດຳເນີນການທົບທວນຄືນ ໂດຍສອດຄ່ອງກັບ ມາດຕະຖານ ການທົບທວນຄືນ ແບບສາກົນ 2410 "ການທົບທວນຄືນ ເອກະສານລາຍງານການເງິນ ໂດຍຜູ້ກວດສອບ ອິດສະຫຼະ", ການທົບທວນຄືນເອກະສານລາຍງານການເງິນ ໄດ້ໃຊ້ວິທີການສອບຖາມບຸກ ຄະລາກອນທີ່ຮັບຜິດຊອບ ຕໍ່ຝ່າຍບັນຊີ-ການເງິນ ແລະ ໄດ້ດຳເນີນການວິເຄາະຂໍ້ມູນ ດ້ານການເງິນທີ່ກ່ຽວຂ້ອງ ແລະ ວິທີການອື່ນໆ. ການ ທົບທວນຄືນໃຫ້ຄວາມເຊື່ອໝັ້ນໜ້ອຍກວ່າການກວດສອບ ເພາະການກວດສອບ ແມ່ນໄດ້ປະຕິບັດຕາມ ມາດຕະຖານການກວດສອບສາກົນ ເພາະສະນັ້ນການທົບທວນຄືນຈຶ່ງບໍ່ສາມາດໃຫ້ຄວາມເຊື່ອໝັ້ນທຽບເທົ່າການກວດສອບ ຕໍ່ສິ່ງທີ່ເປັນສາລະສຳຄັນທັງໝົດ ທີ່ອາດຈະພົບເຫັນໃນການກວດສອບ ຂອງພວກເຮົາໄດ້, ດັ່ງນັ້ນ ພວກເຮົາຈະບໍ່ສະແດງຄວາມເຫັນບົນພື້ນຖານການກວດສອບ.

ສະຫລຸບ

ບົນພື້ນຖານການທົບທວນຄືນ ຂອງພວກເຮົາ, ບໍ່ມີຫຍັງທີ່ເປັນສາລະສຳຄັນ ທີ່ເປັນສາເຫດໃຫ້ເຊື່ອວ່າ ເອກະສານລາຍງານການເງິນ ດັ່ງກ່າວ ໄດ້ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ແລະ ບໍ່ສອດຄ່ອງກັບນະໂຍບາຍການບັນຊີຂອງບໍລິສັດ ທີ່ໄດ້ອະທິບາຍໄວ້ໃນບົດອະທິບາຍຂໍ້ທີ 2 ໃນ ເອກະສານລາຍງານການເງິນນີ້.

ບໍລິສັດ ພຣາຍສ໌ເຮົ້າສ໌ກຸບເປີສ໌ (ລາວ) ຈຳກັດ ຜູ້ດຽວ

ທ່ານ ອະພິສິດ ທ່ຽງຕົ່ງພົນໄຍ
ຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ສປປ ລາວ
ວັນທີ: 13 ສິງຫາ 2021

ໃບລາຍງານຖານະການເງິນ
ສິ້ນສຸດ ວັນທີ 30 ມິຖຸນາ 2021

	ບິດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2021 ກີບ	ກວດສອບ 31 ທັນວາ 2020 ກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ		489.546.690	601.410.714
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ		12.230.218.991	12.885.125.000
ເຄື່ອງໃນສາງ, ສຸດທິ		681.148.069	549.561.067
ວັດສະດຸສະໜອງ, ສຸດທິ		744.909.322	1.277.912.121
ຄ່າເຍື່ອນຊຳລະຕົ້ນທຶນການປູກເບ້ຍປາມເພື່ອຂາຍ		1.585.695.570	1.727.220.633
ຊັບສິນໝຸນວຽນອື່ນໆ		1.669.201.188	1.354.380.792
ລວມຊັບສິນໝຸນວຽນ		**17.400.719.830**	**18.395.610.327**
ຊັບສິນບໍ່ໝຸນວຽນ			
ຊັບສິນບັດຄົງທີ່ ມີຕົວຕົນ, ສຸດທິ	4	19.552.713.244	20.690.003.300
ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ, ສຸດທິ	5	24.714.893.880	25.104.577.522
ລວມຊັບສິນບໍ່ໝຸນວຽນ		**44.267.607.124**	**45.794.580.822**
ລວມຊັບສິນ		**61.668.326.954**	**64.190.191.149**
ໜີ້ສິນ ແລະ ທຶນເຈົ້າຂອງ			
ໜີ້ສິນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		1.418.429.549	2.335.178.099
ເງິນກູ້ຢືມໄລຍະສັ້ນ	6	3.480.980.000	3.446.800.000
ໜີ້ຕ້ອງສົ່ງຈາກການເຊົ່າຊື້ໝຸນວຽນ	7	659.236.860	587.576.060
ໜີ້ສິນໝຸນວຽນອື່ນໆ		160.127.453	16.035.245
ລວມໜີ້ສິນໝຸນວຽນ		**5.718.773.862**	**6.385.589.404**
ໜີ້ສິນບໍ່ໝຸນວຽນ			
ໜີ້ຕ້ອງສົ່ງຈາກການເຊົ່າຊື້	7	545.657.123	851.426.087
ລວມໜີ້ສິນບໍ່ໝຸນວຽນ		**545.657.123**	**851.426.087**
ລວມໜີ້ສິນ		**6.264.430.985**	**7.237.015.491**
ທຶນເຈົ້າຂອງ			
ທຶນຈົດທະບຽນ		50.000.000.000	50.000.000.000
ສ່ວນເພີ່ມທຶນ		3.269.466.406	3.269.466.406
ຄັງສະສົມຕາມລະບຽບການ		907.166.353	907.166.353
ກຳໄລສະສົມລໍຖ້າແບ່ງປັນ		1.227.263.210	2.776.542.899
ລວມທຶນເຈົ້າຂອງ		**55.403.895.969**	**56.953.175.658**
ລວມໜີ້ສິນ ແລະ ທຶນເຈົ້າຂອງ		**61.668.326.954**	**64.190.191.149**

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 13 ສິງຫາ 2021

ທ່ານ ວັນສະເຫຼີມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 13 ສິງຫາ 2021

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 12 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ໃບລາຍງານຜົນໄດ້ຮັບ
ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2021

	ບິດ ອະທິບາຍ	ທີ່ຍທອນຄືນ 30 ມິຖຸນາ 2021 ກີບ	ທີ່ຍທອນຄືນ 30 ມິຖຸນາ 2020 ກີບ
ລາຍຮັບຈາກການຂາຍ ແລະ ການບໍລິການ		11.494.337.614	17.766.483.626
ຕົ້ນທຶນໃນການຂາຍ ແລະ ການບໍລິການ		(9.217.525.767)	(16.144.264.192)
ກຳໄລລວມ		**2.276.811.847**	**1.622.219.434**
ລາຍຈ່າຍການຂາຍ ແລະ ບໍລິຫານ		(3.724.679.016)	(3.338.629.355)
ລາຍຮັບອື່ນໆ		417.564.828	576.035.102
ຂາດທຶນຈາກອັດຕາແລກປ່ຽນ		(322.574.774)	(360.801.227)
ຂາດທຶນຈາກການດຳເນີນງານ		**(1.352.877.115)**	**(1.501.176.046)**
ລາຍຈ່າຍທາງການເງິນ		(196.402.574)	(196.021.604)
ຂາດທຶນກ່ອນຫັກອາກອນກຳໄລ		**(1.549.279.689)**	**(1.697.197.650)**
ອາກອນກຳໄລ	8	-	-
ຂາດທຶນສຸດທິສຳລັບງວດ		**(1.549.279.689)**	**(1.697.197.650)**
ກຳໄລຕໍ່ຮຸ້ນ			
ກຳໄລພື້ນຖານຕໍ່ຮຸ້ນ	9	(15)	(17)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ບໍລິສັດ ລາວ ອາໂກຣເທັກ ມະຫາຊົນ
Lao Agro Tech Public Company

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 13 ສິງຫາ 2021

ທ່ານ ວັນສະເຫຼີມ ສີສຸດຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 13 ສິງຫາ 2021

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 12 ແມ່ນເປັນພາກສ່ວນໜຶ່ງ ຂອງເອກະສານລາຍງານການເງິນ.

ໃບລາຍງານສ່ວນປ່ຽນແປງທຶນເຈົ້າຂອງ
ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2021

	ທຶນຈົດທະບຽນ	ສ່ວນເພີ່ມທຶນ	ກຳໄລສະສົມ		ລວມ
			ຄ້າງສະສົມຕາມ ລະບຽບການ	ກຳໄລສະສົມ ລໍຖ້າແບ່ງປັນ	
	ກີບ	ກີບ	ກີບ	ກີບ	ກີບ
ຍອດຍົກມາ					
ໃນວັນທີ 1 ມັງກອນ 2021 - ກວດສອບ	50.000.000.000	3.269.466.406	907.166.353	2.776.542.899	56.953.175.658
ຂາດທຶນໃນງວດ	-	-	-	(1.549.279.689)	(1.549.279.689)
ຍອດເຫຼືອທ້າຍງວດ					
ວັນທີ 30 ມິຖຸນາ 2021- ທີ່ບທວນຄືນ	**50.000.000.000**	**3.269.466.406**	**907.166.353**	**1.227.263.210**	**55.403.895.969**
ຍອດຍົກມາ					
ໃນວັນທີ 1 ມັງກອນ 2020 - ກວດສອບ	50.000.000.000	3.269.466.406	907.166.353	5,761.785.567	59.938.418.326
ຂາດທຶນໃນງວດ	-	-	-	(1.697.197.650)	(1.697.197.650)
ຍອດເຫຼືອທ້າຍງວດ					
ວັນທີ 30 ມິຖຸນາ 2020 - ທີ່ບທວນຄືນ	**50.000.000.000**	**3.269.466.406**	**907.166.353**	**4.064.587.917**	**58.241.220.676**

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 13 ສິງຫາ 2021

ທ່ານ ວັນສະເຫຼີມ ສີສຸຄຳມັ່ງ
ຫົວໜ້າບັນຊີ - ການເງິນ
ວັນທີ: 13 ສິງຫາ 2021

ບົດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 12 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານກະແສເງິນສົດ
ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2021

	ບິດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2021 ກີບ	ທີ່ບທວນຄືນ 30 ມິຖຸນາ 2020 ກີບ
ຂາດທຶນກ່ອນເສຍອາກອນ		**(1.549.279.689)**	**(1.697.197.650)**
ລາຍການປັບປຸງ:			
ຄ່າຫຼ້ຍຫ້ຽນ	4	1.140.390.056	1.212.509.372
ຄ່າຕັດຮອນ	5	451.834.957	414.898.863
ການສູນເສຍມູນຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ	5	371.441.221	-
ຂາດທຶນຈາກອັດຕາແລກປ່ຽນ		86.956.370	341.854.573
ລາຍຈ່າຍອັດຕາດອກເບ້ຍ		196.402.574	-
ການປ່ຽນແປງໃນ ທຶນມູນວຽນ:			
ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ		654.906.009	(660.990.057)
ເຄື່ອງໃນສາງ. ສຸດທິ		(131.587.002)	1.129.773.119
ວັດສະດຸສະໜອງ. ສຸດທິ		533.002.799	199.458.013
ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ-ເບ້ຍປາມເພື່ອຂາຍ		141.525.063	(115.233.582)
ຊັບສິນໝຸນວຽນອື່ນໆ		(314.820.396)	(114.249.669)
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		(998.487.650)	125.832.043
ໜີ້ສິນໝຸນວຽນອື່ນໆ		144.092.208	52.217.783
ກະແສເງິນສົດຈາກກິດຈະກຳການດຳເນີນງານ		**726.376.520**	**888.872.808**
ອາກອນກຳໄລທີ່ຈ່າຍ		-	(135.620.263)
ດອກເບ້ຍທີ່ຈ່າຍ		(190.424.586)	(206.383.754)
ເງິນສົດສຸດທິຈາກກິດຈະກຳການດຳເນີນງານ		**535.951.934**	**546.868.791**

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 13 ສິງຫາ 2021

ທ່ານ ວັນສະເຫຼີມ ສີສຸຄຳມັງ
ຫົວໜ້າບັນຊີ - ການເງິນ
ວັນທີ: 13 ສິງຫາ 2021

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 12 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

ໃບລາຍງານກະແສເງິນສົດ
ສຳລັບໄລຍະ 6 ເດືອນຕົ້ນປີສິ້ນສຸດ 30 ມິຖຸນາ 2021

	ບິດ ອະທິບາຍ	ທີ່ບທວນຄືນ 30 ມິຖຸນາ 2021 ກີບ	ທີ່ບທວນຄືນ 30 ມິຖຸນາ 2020 ກີບ
ກະແສເງິນສົດຈາກກິດຈະກຳການລົງທຶນ			
ຊື້ຊັບສົມບັດຄົງທີ່ ມິຕິອຕົນ		(3.100.000)	(49.707.525)
ຈ່າຍຄ່າຕົ້ນທຶນການປຸກຕົ້ນປາມ		(433.592.536)	(1.145.930.315)
ເງິນສົດໃຊ້ສຸດທິ ໃນກິດຈະກຳການລົງທຶນ		**(436.692.536)**	**(1.195.637.840)**
ກະແສເງິນສົດຈາກກິດຈະກຳການເງິນ			
ເງິນສົດຮັບຈາກການເງິນກູ້ຢືມ	6	3.480.980.000	1.789.200.000
ຈ່າຍເງິນຄືນຈາກການເງິນກູ້ຢືມ	6	(3.446.800.000)	(1.798.000.000)
ຈ່າຍເງິນຕົ້ນຄືນຈາກການເຊົ່າຊື້	7	(246.286.660)	(395.019.327)
ເງິນສົດສຸດທິໃຊ້ໃນກິດຈະກຳການເງິນ		**(212.106.660)**	**(403.819.327)**
ເພີ່ມຂຶ້ນສຸດທິ ໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		**(112.847.262)**	**(1.052.588.376)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ຕົ້ນປີ		601.410.714	1.642.354.110
ກຳໄລຈາກອັດຕາແລກປ່ຽນໃນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		983.238	12.544.062
ເງິນສົດ ແລະ ລາຍການທຽບເທົ່າເງິນສົດທ້າຍງວດ		**489.546.690**	**602.309.796**
ລາຍການສຳຄັນທີ່ບໍ່ແມ່ນເງິນສົດ:			
ການໄດ້ມາຂອງຊັບສົມບັດຄົງທີ່ມິຕິອຕົນ ທີ່ຍັງບໍ່ໄດ້ຊຳລະ		1.248.326.925	1.931.344.586

ທ່ານ ອຸດົມ ແກ້ວທະວົງ
ຜູ້ອຳນວຍການ
ວັນທີ: 13 ສິງຫາ 2021

ທ່ານ ວັນສະເຫຼີມ ສີສຸດຳມັງ
ຫົວໜ້າບັນຊີ - ການເງິນ
ວັນທີ: 13 ສິງຫາ 2021

ບິດອະທິບາຍຊ້ອນທ້າຍ ແຕ່ໜ້າທີ 7 - 12 ແມ່ນເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ.

1 ຂໍ້ມູນທົ່ວໄປ

ບໍລິສັດ ລາວອາໂກຣເທັກ ມະຫາຊົນ (ບໍລິສັດ) ແມ່ນ ບໍລິສັດ ມະຫາຊົນ ທີ່ສ້າງຕັ້ງຂຶ້ນ ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ("ສປປ ລາວ").

ມີສຳນັກງານຈົດທະບຽນຕັ້ງຢູ່ ບ້ານອັດໄຕນ້ອຍທົ່ງ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ກິດຈະກຳຫຼັກຂອງບໍລິສັດ ແມ່ນ ອຸດສາຫະກຳນ້ຳມັນປາມ ເຊິ່ງເລີ່ມຈາກການເພາະປູກເມັຍຕົ້ນປາມ (Palm), ປູກຕົ້ນປາມ, ຜະລິດ ແລະ ຈຳໜ່າຍຜະລິດຕະພັນປາມໂດຍບໍລິສັດເອງ. ນອກຈາກນີ້ບໍລິສັດຍັງສະໜອງເມັຍຕົ້ນປາມໃຫ້ປະຊາຊົນ ສຳລັບການເພາະປູກ ແລະ ເກັບຊື້ຄືນໝາກປາມ.

ນອກຈາກນີ້ ບໍລິສັດ ຍັງໄດ້ນຳເຂົ້າສິນຄ້າສຳເລັດຮູບ ເຊັ່ນນ້ຳມັນປຸງແຕ່ງອາຫານ ແລະ ນ້ຳໝາກພ້າວ ຈາກປະເທດໄທ ເພື່ອຈຳໜ່າຍ ໃນ ສປປ ລາວ.

ເອກະສານລາຍງານການເງິນສະບັບນີ້ໄດ້ຮັບການຮັບຮອງຈາກສະພາຜູ້ອຳນວຍການໃນວັນທີ 13 ສິງຫາ 2021.

2 ພື້ນຖານໃນການກະກຽມບົດລາຍງານ

ເອກະສານລາຍງານການເງິນກາງປີໄດ້ຖືກສ້າງຂຶ້ນໂດຍອີງຕາມນະໂຍບາຍການບັນຊີ ຂອງບໍລິສັດດັ່ງທີ່ໄດ້ອະທິບາຍໄວ້ໃນລາຍລະອຽດເພີ່ມເຕີມໃນເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ ວັນທີ 31 ທັນວາ 2020. ເອກະສານລາຍງານການເງິນຫຼັກເຊັ່ນ: ໃບລາຍງານຖານະການເງິນ, ໃບລາຍງານຜົນໄດ້ຮັບ, ໃບລາຍງານສ່ວນປ່ຽນແປງທຶນຂອງຕົນເອງ ແລະ ໃບລາຍງານກະແສເງິນສົດ ຖືກນຳສະເໜີໃນຮູບແບບທີ່ສອດຄ່ອງກັບເອກະສານລາຍງານການເງິນປະຈຳປີໂດຍປະຕິບັດຕາມລະບຽບການລາຍງານ ແລະ ການເປີດເຜີຍທີ່ອອກໂດຍ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

ເອກະສານລາຍງານການເງິນ 6 ເດືອນຕົ້ນປີສະບັບນີ້ ຄວນອ່ານຄູ່ກັບເອກະສານລາຍງານການເງິນປະຈຳປີ ສຳລັບປີສິ້ນສຸດ 31 ທັນວາ 2020.

ໃນການກະກຽມເອກະສານລາຍງານການເງິນ ຮຽກຮ້ອງໃຫ້ຜູ້ບໍລິຫານຕ້ອງໃຊ້ການຄາດຄະເນ ແລະ ຕັ້ງຂໍ້ສົມມຸດທີ່ມີຜົນກະທົບຕໍ່ຊັບສິນ ແລະ ໜີ້ສິນທີ່ຖືກລາຍງານ, ການເປີດເຜີຍຊັບສິນ ແລະ ໜີ້ສິນທີ່ອາດເກີດຂຶ້ນ ໃນວັນທີຂອງເອກະສານລາຍງານການເງິນ, ລາຍຮັບ ແລະ ລາຍຈ່າຍໃນໄລຍະເວລາທີ່ລາຍງານ, ເຖິງແມ່ນວ່າການຄາດຄະເນເຫຼົ່ານີ້ແມ່ນອີງໃສ່ຄວາມຮູ້ຂອງຜູ້ບໍລິຫານກ່ຽວກັບເຫດການ ແລະ ການກະທຳໃນປະຈຸບັນກໍ່ຕາມ, ແຕ່ຜົນໄດ້ຮັບຕົວຈິງອາດຈະແຕກຕ່າງຈາກການຄາດຄະເນເຫຼົ່ານັ້ນ.

3 ເຫດການທີ່ສຳຄັນໃນປັດຈຸບັນ

ການລະບາດຂອງພະຍາດ Coronavirus 2019 ("COVID-19") ໃນຕົ້ນປີ 2021 ມີຜົນກະທົບທີ່ບໍ່ດີຕໍ່ຜົນການດຳເນີນງານສຳລັບ ໄລຍະ 6 ເດືອນຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2021 ໂດຍສະເພາະຕໍ່ທຸລະກິດການຄ້າ.

ໃນວັນທີ 21 ເມສາ 2021, ລັດຖະບານແຫ່ງ ສປປ ລາວ (GoL) ໄດ້ອອກໜັງສືແຈ້ງການເລກທີ.15/ນຍ ກ່ຽວກັບການປິດປະເທດ ແລະ ທຸກເມືອງໃນປະເທດລາວ ເພື່ອປ້ອງກັນການເພີ່ມຂຶ້ນຂອງຜູ້ຕິດເຊື້ອພະຍາດໂຄວິດ-19. ໃນໜັງສືແຈ້ງການຍັງໄດ້ລະບຸເຖິງການຢຸດ ສະງັດການດຳເນີນກິດຈະການອົງກອນທຸລະກິດ ແລະ ອົງກອນອື່ນໆ, ງົດການຈັດງານ ອື່ນໆທີ່ມີການຊຸມນຸມຫຼາຍກວ່າ 12 ຄົນຂຶ້ນໄປ, ໜັງສືແຈ້ງການສະບັບນີ້ແມ່ນມີຜົນບັງຄັບໃຊ້ນັບຕັ້ງແຕ່ວັນທີ 21 ເມສາ 2021 ເປັນຕົ້ນໄປ.

ບັນດາມາດຕະການປ້ອງກັນລ່ວງໜ້າທີ່ສືບຕໍ່ໄດ້ຮັບການປະຕິບັດໃນທົ່ວພາກພື້ນແມ່ນເປັນຈຳກັດ ແລະ ຄວບຄຸມຂອງການລະບາດເຊື້ອ ພະຍາດ. ດັ່ງນັ້ນ, ລາຍຮັບຈາກການຂາຍນ້ຳມັນ Biodiesel 05 ແມ່ນຫຼຸດລົງປະມານ 9 ຕື້ກີບ ຫຼື 77% ຂອງລາຍຮັບສຳລັບໄລຍະ 6 ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2021 ສົມທຽບໃສ່ໄລຍະ 6 ຕົ້ນປີສິ້ນສຸດວັນທີ 30 ມິຖຸນາປີ 2020. ເຖິງຢ່າງໃດກໍ່ຕາມ, ການດຳເນີນ ງານສ່ວນໃຫຍ່ໄດ້ກັບຄືນສູ່ປົກກະຕິໃນເດືອນ ມິຖຸນາ 2021. ບໍລິສັດຍັງເອົາໃຈໃສ່ຕໍ່ການຕິດຕາມຢ່າງໃກ້ສິດກ່ຽວກັບສະຖານະການ ການລະບາດຂອງພະຍາດ COVID-19, ເພື່ອປະເມີນຜົນກະທົບຂອງພະຍາດດັ່ງກ່າວຕໍ່ການດຳເນີນງານເຊິ່ງຢູ່ໃນໄລຍະການອາຫຼຸດທະ ສາດໃນການແກ້ໄຂຢ່າງມີປະສິດຕິຜົນ.

4 ຊັບສິນຄົງທີ່ ມີຕົວຕົນ, ສຸດທິ

	ກີບ
ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2021	
ຍອດຍົກມາ ສຸດທິ ໃນວັນທີ 1 ມັງກອນ - ກວດສອບ	**20.690.003.300**
ເພີ່ມຂຶ້ນ	3.100.000
ຄ່າຫຼ້ຍຫ້ຽນ	(1.140.390.056)
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2021 - ທີບ ທອນຄົນ	**19.552.713.244**

ການເພີ່ມຂຶ້ນຂອງຊັບສິນຄົງທີ່ມີຕົວຕົນໃນໄລຍະ 6 ເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2021 ສ່ວນຫຼາຍແມ່ນການຈັດຊື້ເຄື່ອງ ອຸປະກອນທີ່ອຳນວຍຄວາມສະດວກໃນການການຜະລິດຫມາກປາມໃນໂຮງງານຜະລິດປາມ.

5 ຄ່າເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ, ສຸດທິ

	ກີບ
ໄລຍະ 6 ເດືອນ ຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2021	
ຍອດຍົກມາ ສຸດທິ ໃນວັນທີ 1 ມັງກອນ - ກວດສອບ	**25.104.577.522**
ເພີ່ມຂຶ້ນ	433.592.536
ການສູນເສຍມູນຄ່າ	(371.441.221)
ຫັກ: ຄ່າຕັດຮອນ	(451.834.957)
ຍອດເຫຼືອທ້າຍ - ທີ່ບທວນຄືນ	**24.714.893.880**
ເຍື່ອນລໍຖ້າຕັດຕົ້ນທຶນການປູກຕົ້ນປາມ	28.112.950.884
ຫັກ: ຄ່າຕັດຮອນສະສົມ	(3.398.057.004)
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2021 - ທີ່ບທວນຄືນ	**24.714.893.880**

ໃນວັນທີ 30 ມິຖຸນາ 2021, ມີສວນປາມທີ່ພ້ອມຈະເກັບກ່ຽວ 5 ສວນ ເຊິ່ງມີຕົ້ນທຶນການປູກເຍື່ອນລໍຖ້າຕັດມູນຄ່າ 22.810.264.789 ກີບ ແລະ ໄດ້ຕັດຮອນ ແລະ ບັນທຶກເຂົ້າໃນໃບລາຍງານຜົນໄດ້ຮັບ ສຳລັບ 6 ເດືອນຕົ້ນປີ ສິ້ນສຸດວັນທີ 30 ມິຖຸນາ 2021 ມູນຄ່າ 451.834.957 ກີບ (2020: 414.898.863).

ການເພີ່ມຂຶ້ນສ່ວນໃຫຍ່ແມ່ນການປູກຕົ້ນປາມໃໝ່ ຢູ່ທີ່ ເມືອງ ສະໝ້ວຍ, ແຂວງສາລະວັນ ແລະ ສວນແອກຊ້າງ, ເມືອງໂພນໂຮງ ແຂວງວຽງຈັນ.

6 ເງິນກູ້ຢືມໄລຍະສັ້ນ

	ກີບ
ຍອດຍົກມາ ສຸດທິ ໃນວັນທີ 1 ມັງກອນ - ກວດສອບ	**3.446.800.000**
ເພີ່ມຂຶ້ນ	3.480.980.000
ຈ່າຍຄືນ	(3.446.800.000)
ຍອດເຫຼືອທ້າຍງວດ ສຸດທິ ໃນວັນທີ 30 ມິຖຸນາ 2021 - ທີ່ບທວນຄືນ	**3.480.980.000**

ໃນໄລຍະ 6 ເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2021, ບໍລິສັດໄດ້ຖອນເງິນກູ້ໄລຍະສັ້ນເພີ່ມເຕີມຈາກທະນາຄານໄຊ່ງອນ-ຮ່າໂນ້ຍ ລາວ ຈຳກັດ ມູນຄ່າ 3.480.980.000 ກີບ ແລະ ໄດ້ມີການຈ່າຍເງິນຕົ້ນຄືນໃຫ້ແກ່ທະນາຄານມູນຄ່າ 3.446.800.000 ກີບ.

7 ໜີ້ຕ້ອງສົ່ງຈາກການເຊົ່າຊື່

	ທີບທອນຄົນ 30 ມິຖຸນາ 2021 ກີບ
ໝຸນວຽນ	
ໜີ້ຕ້ອງສົ່ງຈາກການເຊົ່າຊື້ໝຸນວຽນ	659.236.860
ບໍ່ໝຸນວຽນ	
ໜີ້ຕ້ອງສົ່ງຈາກການເຊົ່າຊື້	545.657.123
	1.204.893.983

ໃນໄລຍະ 6 ເດືອນ ຕົ້ນປີສິ້ນສຸດວັນທີ 30 ມິຖຸນາ 2021, ບໍລິສັດໄດ້ຊຳລະເງິນຕົ້ນມູນຄ່າ 718.750 ບາດ ຫຼືເທົ່າກັບ 237.503.746 ກີບ ແລະ ຊຳລະດອກເບ້ຍມູນຄ່າ 107.813 ບາດ ຫຼືເທົ່າກັບ 29.889.940 ກີບ ໃຫ້ກັບບໍລິສັດ ວິນອໂຕ ຊັບ ພາຍ ຈຳກັດ ຈຳນວນ 5 ຄັນ. ນອກຈາກນີ້, ບໍລິສັດໄດ້ຊຳລະເງິນຕົ້ນມູນຄ່າ 8.782.914 ກີບ ແລະ ຊຳລະດອກເບ້ຍມູນຄ່າ 2.959.237 ກີບ ໃຫ້ກັບບໍລິສັດ ດີຈີບີ ລາວ ເຊົ່າສິນເຊື່ອ ຈຳກັດ ຈຳນວນ 1 ຄັນ.

8 ອາກອນກຳໄລ

ອີງຕາມກົດໝາຍສ່ວຍສາອາກອນຂອງ ສປປ ລາວ ບໍລິສັດ ມີພັນທະໃນການຊຳລະອາກອນກຳໄລ ໃນຮູບແບບຂອງອາກອນກຳໄລ ໃນອັດຕາ ແມ່ນ 20% ຂອງກຳໄລທາງອາກອນ. ນອກຈາກນີ້, ບໍລິສັດຈົດທະບຽນໃນຕະຫລາດຫຼັກຊັບລາວ ເຊິ່ງອີງຕາມລະບຽບ ຂອງຕະຫຼາດຫຼັກຊັບ ບໍລິສັດຈະໄດ້ຮັບສ່ວນຫຼຸດຕື່ມອີກ 5% ຈາກອັດຕາອາກອນກຳໄລປະຈຳປີ ເປັນເວລາ 4 ປີນັບຈາກປີທີ່ ບໍລິສັດໄດ້ເຂົ້າຕະຫຼາດຫຼັກຊັບ ອີງຕາມກົດໝາຍວ່າດ້ວຍອາກອນຂອງ ສປປລາວ.

ລະບົບອາກອນໃນ ສປປ ລາວ ແມ່ນຂ້ອນຂ້າງໃໝ່ ແລະ ມີອາກອນທີ່ຫຼາກຫຼາຍ ແລະ ມັກມີການດັດປັບກົດໝາຍເລື້ອຍໆ ຊຶ່ງມັນບໍ່ ຈະແຈ້ງ. ຂັດແຍ້ງກັນ ແລະ ມີການຕີຄວາມໝາຍທີ່ແຕກຕ່າງກັນກັບທີ່ມີຢູ່ໃນໜ່ວຍງານໄລ່ລຽງອາກອນ ແລະ ເຂດອຳນາດສານ. ອາກອນອາດມີການທົບທອນ ແລະ ກວດສອບຄືນຈາກເຈົ້າໜ້າທີ່ ຜູ້ເຊິ່ງສາມາດປັບໃໝ ແລະ ລິງໂທດ.

ປັດໃຈເຫຼົ່ານີ້ ອາດສ້າງຄວາມສ່ຽງທາງອາກອນໃນ ສປປ ລາວ ທີ່ມີສາລະສຳຄັນກວ່າປະເທດອື່ນໆ. ຜູ້ບໍລິຫານ ເຊື່ອວ່າ ໄດ້ຈັດ ກຽມຢ່າງພຽງພໍສຳລັບໜີ້ຕ້ອງສົ່ງອາກອນ ຕາມການຕີຄວາມຂອງ ກົດໝາຍສ່ວຍສາອາກອນ. ເຖິງຢ່າງໃດກໍ່ຕາມ ເຈົ້າໜ້າທີ່ທີ່ ກ່ຽວຂ້ອງອາດມີການຕີຄວາມທີ່ແຕກຕ່າງກັນ ແລະ ຜົນກະທົບຂອງຄວາມແຕກຕ່າງດັ່ງກ່າວອາດມີສາລະສຳຄັນ.

ໄລຍະສຳລັບ 6 ເດືອນ ຕົ້ນປີ ສິ້ນສຸດ ວັນທີ 30 ມິຖຸນາ 2021 ບໍລິສັດລາວອາໂກຣເທັກມະຫາຊົນບໍ່ໄດ້ຕັ້ງໜີ້ຄ້າງຈ່າຍອາກອນກຳ ໄລ ເນື່ອງຈາກການຂາດທຶນຈາກການດຳເນີນງານ.

9 ກຳໄລຕໍ່ຮຸ້ນ

ກຳໄລພື້ນຖານຕໍ່ຮຸ້ນແມ່ນຖືກຄິດໄລ່ຕາມອັດຕາສ່ວນຂອງກຳໄລຕໍ່ຜູ້ຖືຫຸ້ນໂດຍຄິດໄລ່ແບບອັດຕາທ່ວງນ້ຳໜັກສະເລ່ຍຂອງ ຈຳນວນຮຸ້ນສາມັນໃນລະຫວ່າງງວດ.

	ທີບທອນຄົນ 30 ມິຖຸນາ 2021	ທີບທອນຄົນ 30 ມິຖຸນາ 2020
ຂາດທຶນສຳລັບຜູ້ຖືຮຸ້ນສາມັນ (ກີບ)	**(1.549.279.689)**	**(1.697.197.650)**
ອັດຕາທ່ວງນ້ຳໜັກສະເລ່ຍຂອງຈຳນວນຮຸ້ນສາມັນ ຄົງເຫຼືອ (ຮຸ້ນ)	100.000.000	100.000.000
ກຳໄລພື້ນຖານຕໍ່ຮຸ້ນ (ກີບຕໍ່ຮຸ້ນ)	(15)	(17)

10 ພາກສ່ວນທີ່ກ່ຽວຂ້ອງ

ວິສາຫະກິດ ແລະ ບຸກຄົນ ທີ່ກ່ຽວຂ້ອງທາງກົງ ຫຼື ທາງອ້ອມ ຜ່ານ ໜຶ່ງ ຫຼື ຫຼາຍກຸ່ມ ຄວບຄຸມ ຫຼື ຖືກຄວບຄຸມໂດຍບໍລິສັດ ຫຼື ພາຍໃຕ້ການຄວບຄຸມທົ່ວໄປຂອງບໍລິສັດ ລວມທັງບໍລິສັດ ທີ່ເຮັດໜ້າທີ່ຖືຮຸ້ນ ບໍລິສັດ ຍ່ອຍ ແລະ ບໍລິສັດ ທີ່ກ່ຽວຂ້ອງກັບບໍລິສັດຍ່ອຍ ຖືເປັນບໍລິສັດໃນກຸ່ມດຽວກັນ ບຸກຄົນທີ່ເປັນເຈົ້າຂອງທາງກົງ ຫຼື ທາງອ້ອມ ທີ່ມີສ່ວນໄດ້ເສຍໃນບໍລິສັດ ແລະ ມີອິດທິພົນຫຼາຍຕໍ່ກັບບໍລິສັດ. ຜູ້ບໍລິຫານຫຼັກ ລວມມີ ຜູ້ອຳນວຍການ ແລະ ພະນັກງານຂອງບໍລິສັດ ແລະ ສະມາຊິກໃກ້ຊິດໃນຄອບຄົວຂອງບຸກຄົນເຫຼົ່ານີ້ ແລະ ບໍລິສັດໃນກຸ່ມ ກັບບຸກຄົນທີ່ກ່ຽວຂ້ອງ ເຫຼົ່ານີ້ແມ່ນຖືເປັນພາກສ່ວນທີ່ກ່ຽວຂ້ອງ.

ໃນການພິຈາລະນາ ຄວາມເປັນໄປໄດ້ໃນສາຍສຳພັນຂອງພາກສ່ວນທີ່ກ່ຽວຂ້ອງແມ່ນພິຈາລະນາເຖິງ ສາຍສຳພັນທີ່ແທ້ຈິງ. ບໍ່ໄດ້ພິຈາລະນາພຽງແຕ່ໃນຮູບແບບຂອງກົດໝາຍເທົ່ານັ້ນ.

ລາຍການທີ່ສຳຄັນລຸ່ມນີ້ແມ່ນມີການພົວພັນກັບພາກສ່ວນທີ່ກ່ຽວຂ້ອງໃນໄລຍະ 6 ເດືອນຕົ້ນປີ:

10.1 ການຊື້ສິນຄ້າ

	ທີບທອນຄົນ 30 ມິຖຸນາ 2021 ກີບ	ທີບທອນຄົນ 30 ມິຖຸນາ 2020 ກີບ
ຊື້ສິນຄ້າ ແລະ ລາຍການອື່ນໆກັບພາກສ່ວນທີ່ກ່ຽວຂ້ອງ		
- ບໍລິສັດ OPG Tech (ປະເທດໄທ)	-	2.061.485.754

10 ພາກສ່ວນທີ່ກ່ຽວຂ້ອງ (ຕໍ່)

10.2 ຍອດເຫຼືອຈາກການຊື້ ແລະ ການຂາຍສິນຄ້າ ແລະ ລາຍການອື່ນໆ

	ທີ່ບທວນຄືນ 30 ມິຖຸນາ 2021 ກີບ	ກວດສອບ 31 ທັນວາ 2020 ກີບ
ໜີ້ຕ້ອງສົ່ງໃຫ້:		
ພາກສ່ວນທີ່ກ່ຽວຂ້ອງ – OPG Tech	43.432.942	41.133.651

ໃນວັນທີ 30 ມິຖຸນາ 2021, ໜີ້ຕ້ອງສົ່ງກັບພາກສ່ວນທີ່ກ່ຽວຂ້ອງ ສ່ວນໃຫຍ່ໝາຍເຖິງ ຍອດຄ້າງຊຳລະຈາກຊັບສົມບັດຄົງທີ່ຈາກ ບໍລິສັດ OPG Tech (ປະເທດໄທ) ນັບແຕ່ປີ 2017.